ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ. 0 0 0 0 7 2 2 1

ນະຄອນຫຼວງວຽງຈັນ, ວັນທີ: 27 ສິງຫາ 2021

ຮຽນ: - ທ່ານ ຫົວໜ້າ ສານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງວັນທີ 27 ສິງຫາ 2021.

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດຂໍແຈ້ງມະຕິສຳຄັນ ຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 27 ສິງຫາ 2021 ດັ່ງມີລາຍລະອຽດລຸ່ມນີ້:

- ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດລາຍງານການເງິນປີ 2020 ເຊິ່ງໄດ້ຜ່ານການກວດສອບ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນໃຫ້ ພິຈາລະນາ ແລະ ຮັບຮອງ.
- ອະນຸມັດບໍ່ຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2020 ເພື່ອນຳໃຊ້ເປັນກອງທຶນໃນທຸລະກິດ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.
- ກຳນົດເອົາວັນທີ 02 ກັນຍາ ປີ 2021 ເຊິ່ງເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020.
- ກຳນົດໃນວັນທີ 15 ກັນຍາ ປີ 2021 ເຊິ່ງເປັນວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020
- ອະນຸມັດແຜນທຸລະກິດຂອງ ລອຊ ສຳລັບປີ 2021 ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.
- ອະນັດມັດໃຫ້ ທ່ານ ຮອງຜູ້ອຳນວຍການຝ່າຍການເງິນເປັນຜູ້ກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020.
- ອຸນະມັດ ແລະ ຮັບຮອງເອົາ ທ່ານ Shingo Yamanaka ເປັນສະມາຊິກສະພາບໍລິຫານຄົນໃໝ່, ເປັນ ປະທານເຈົ້າໜ້າທີ່ບໍລິຫານ, ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.
- ອະນຸມັດແຕ່ງຕັ້ງ ທ່ານ Shingo Yamanaka ເປັນຕົວແທນທາງດ້ານກົດໝາຍ (ອອກຊື່ໃນໃບທະບຽນວິສາຫະກິດ) ຄົນໃໝ່ ແລະ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ ແທນທ່ານນາງ Risa Yamaguchi ລາອອກ ວັນທີ 15-09-2021
- ອະນຸມັດແຕ່ງຕັ້ງ ທ່ານ ມິດສຸເທຣ ນາກາຍະ ເປັນຮອງປະທານສະພາບໍລິຫານຄົນໃໝ່, ປະທານຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ, ປະທານຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ແທນ ທ່ານນາງ ມາກິໂກະ ໂອອິກາວາ ລາອອກວັນທີ 15-09-2021 ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.
- ອະນຸມັດແຕ່ງຕັ້ງ ທ່ານ ຮິໂຣຟຸມິ ອິນາດາ ເປັນສະມາຊິກສະພາບໍລິຫານຄົນໃໝ່, ຄະນະກຳມະການກວດສອບ, ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ, ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ແທນ ທ່ານ ໂທໂມຮິໂຣະ ໂຢຊິດາ ລາອອກວັນທີ 15-09-2021 ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ .

- ອະນຸມັດບໍລິສັດກວດສອບ EY ເປັນຜູ້ກວດສອບປະຈຳປີ 2021 ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ

ສະພາບໍລິຫານ



ທ່ານນາງ ຢຸກ ສະກັອດ